ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກົມນະໂຍບາຍເງິນຕາເຜີຍແຜ່ຂໍ້ຕົກລົງວ່າດ້ວຍການບໍລິການແລກປ່ຽນເງິນຕາຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ



ໃນຕອນບ່າຍຂອງວັນທີ 20 ມິຖຸນາ 2022 ທີ່ຫ້ອງປະຊຸມສຳນັກງານທະນາຄານແຫ່ງ ສປປ ລາວ (ທຫລ) ທ່ານ ນາງ ຂັນແກ້ວ ຫຼ້າມະນີເຈົ້າ ຫົວໜ້າກົມນະໂຍບາຍເງິນຕາ ໄດ້ແຈ້ງຕໍ່ສື່ມວນຊົນຊາບກ່ຽວກັບ “ຂໍ້ຕົກລົງວ່າດ້ວຍການບໍລິການແລກປ່ຽນເງິນຕາຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ” ສະບັບເລກທີ 449/ທຫລ ລົງວັນທີ 14 ມິຖຸນາ 2022.

ທ່ານຫົວໜ້າກົມນະໂຍບາຍເງິນຕາ ໄດ້ໃຫ້ຮູ້ວ່າ: ຂໍ້ຕົກລົງວ່າດ້ວຍການບໍລິການແລກປ່ຽນເງິນຕາຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ສະບັບເລກທີ 449/ທຫລ, ລົງວັນທີ 14 ມິຖຸນາ 2022 ເພື່ອປ່ຽນແທນ ສະບັບເກົ່າ ຊຶ່ງແມ່ນ ຂໍ້ຕົກລົງວ່າດ້ວຍການຊື້-ຂາຍເງິນຕາ ກັບມວນຊົນ ຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ສະບັບເລກທີ 109/ທຫລ, ລົງວັນທີ 01 ກຸມພາ 2019. ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ສາມາດຂາຍເງິນຕາຕ່າງປະເທດໃຫ້ບຸກຄົນໄດ້ໃນວົງເງິນບໍ່ເກີນ 15.000.000 ກີບ (ສິບຫ້າລ້ານກີບ) ຕໍ່ຄົນ ຕໍ່ວັນ, ຊຶ່ງລູກຄ້າຕ້ອງລະບຸຈຸດປະສົງໃນການແລກປ່ຽນເງິນຕາຢ່າງຈະແຈ້ງ ພ້ອມທັງ ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ ໄວ້ເປັນຫຼັກຖານ. ຮ້ານແລກປ່ຽນເງິນຕາຕົວແທນ ສາມາດ

ຂາຍເງິນຕາຕ່າງປະເທດໃຫ້ແກ່ບຸກຄົນເທົ່ານັ້ນ ແລະ ບໍ່ສາມາດຂາຍເງິນຕາຕ່າງປະເທດໃຫ້ແກ່ນິຕິບຸກຄົນ; ຊຶ່ງວົງເງິນສູງສຸດທີ່ສາມາດຂາຍໄດ້ທັງໝົດຕໍ່ວັນແມ່ນບໍ່ເກີນທຶນຈົດທະບຽນຂອງຮ້ານແລກປ່ຽນເງິນຕາຕົວແທນເທົ່ານັ້ນ.

ທະນາຄານທຸລະກິດ ເທົ່ານັ້ນ ທີ່ສາມາດຂາຍເງິນຕາຕ່າງປະເທດ ໃຫ້ນິຕິບຸກຄົນ ແລະ ການຈັດຕັ້ງ ຂອງທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງເພື່ອຊໍາລະສະສາງກັບຕ່າງປະເທດ, ໃນນັ້ນ ຕ້ອງພິຈາລະນາຂາຍໃຫ້ຜູ້ທີ່ມີເປົ້າໝາຍຊໍາລະຄ່າສິນຄ້າບູລິມະສິດກ່ອນ ເປັນຕົ້ນ: ນ້ຳມັນເຊື້ອໄຟ, ຢາປົວພະຍາດ, ສິນຄ້າອຸປະໂພກ-ບໍລິໂພກ ທີ່ມີຄວາມຈໍາເປັນ ແລະ ເປົ້າໝາຍຕາມທີ່ກໍານົດໄວ້ ໃນມາດຕາ 10 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ດັ່ງນີ້: ຊໍາລະຄ່າສິນຄ້າທີ່ນໍາເຂົ້າຈາກຕ່າງປະເທດ; ຊໍາລະຄ່າບໍລິການທີ່ຕິດພັນກັບສິນຄ້າ ຂາເຂົ້າ-ຂາອອກ ໂດຍກົງກັບຕ່າງປະເທດ ເຊັ່ນ: ຄ່າຂົນສົ່ງຜ່ານແດນ, ຄ່າປະກັນໄພ, ຄ່າຝາກສາງຜ່ານແດນ ແລະ ຄ່າບໍລິການອື່ນ; ຊໍາລະໜີ້ເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ; ໃຫ້ການຊ່ວຍເຫຼືອແກ່ຕ່າງປະເທດ ຕາມການຕົກລົງຂອງລັດຖະບານ; ໂອນເງິນກໍາໄລ, ເງິນປັນຜົນ, ຕົ້ນທຶນ, ດອກເບ້ຍ, ຄ່າບໍລິການອື່ນ ຂອງນັກລົງທຶນຕ່າງປະເທດ ແລະ ຄ່າແຮງງານຂອງຄົນຕ່າງປະເທດ ກັບຄືນປະເທດ ຫຼື ໄປປະເທດທີສາມ; ໂອນເງິນໄປລົງທຶນຢູ່ຕ່າງປະເທດ; ສຶກສາ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບ ຢູ່ຕ່າງປະເທດ; ປະຕິບັດເປົ້າໝາຍອື່ນ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ນອກຈາກນີ້, ທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ ຍັງໄດ້ເນັ້ນຕື່ມເຖິງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການແລກປ່ຽນເງິນຕາໃຫ້ເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງດັ່ງກ່າວໃຫ້ເຂັ້ມງວດ. ການແລກປ່ຽນເງິນຕາຈາກສະກຸນໜຶ່ງຫາສະກຸນອື່ນຕ້ອງແລກເປັນເງິນກີບກ່ອນຈຶ່ງແລກປ່ຽນອີກຄັ້ງ ບໍ່ໃຫ້ແລກປ່ຽນເງິນຕາຕ່າງປະເທດເປັນເງິນຕາຕ່າງປະເທດໂດຍກົງ.

**#ຂ່າວ ແລະ ພາບໂດຍ: ນາງ ປາໃນ ພັນທະລາ**

## ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ